**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

=====000=====

ກະຊວງສາທາລະນະສຸກ

ກອງເລຂາຄະນະກໍາມະການປະສານງານ

ກອງທຶນໂລກຕ້ານເອດ, ວັນນະໂລກ ແລະ ໄຂ້ຍຸງ

ສປປ ລາວ

# ບົດບັນທຶກກອງປະຊຸມ

ຕາມປົກກະຕິແລ້ວ ກອງປະຊຸມຄະນະກໍາມະການບໍລິຫານງານກອງທຶນໂລກ (ຄບກທລ) ແມ່ນຈະໄດ້ຈັດຂຶ້ນທຸກໆເດືອນ ເພື່ອປຶກສາຫາລື, ຮັບຟັງການລາຍງານຄວາມຄືບໜ້າຂອງການຈັດຕັ້ງປະຕິບັດໂຄງການຕ້ານເອດ, ວັນນະໂລກ, ໄຂ້ຍຸງ ແລະ ການຮັບຮອງ, ແລະ ຕັດສິນບັນຫາຕ່າງໆກ່ຽວກັບການປະຕິບັດວຽກງານໂຄງການຂອງກອງທຶນໂລກ.

**I. ວາລະກອງປະຊຸມ:**

1. ລາຍງານຄວາມຄືບໜ້າກ່ຽວກັບການກະກຽມການຈັດຕັ້ງປະຕິບັດຫ້ອງການຂອງຜູ້ໄດ້ຮັບທຶນຕົ້ນຕໍໃໝ່;
2. ລາຍງານຄວາມຄືບໜ້າກ່ຽວກັບສະພາບການກະກຽມການປິດກອງທຶນຊ່ວຍເຫຼືອຮອບປະຈຸບັນ;
3. ກະກຽມການລົງຕິດຕາມກວດກາທີ່ພາກສະໜາມ;
4. ສົນທະນາປຶກສາຫາລືວຽກອື່ນໆແລະປິດກອງປະຊຸມ, ການຂໍເງິນເພີ່ມ ແລະ ການຂໍຜູ້ຊ່ວຍວິຊາການດ້ານການເງິນ.

**II. ວັນເວລາ:** ວັນສຸກ, ທີ 12 ມັງກອນ 2018, ເວລາ 13:30 ເຖິງ 16:00.

**III. ສະຖານທີ່:** ຫ້ອງປະຊຸມຊັ້ນ 3, ກະຊວງສາທາລະນະສຸກ.

**IV. ຜູ້ເຂົ້າຮ່ວມ:** ສະມາຊິກຄະນະບໍລິຫານງານຈໍານວນ 03 ທ່ານ ແລະ ຜູ້ເຂົ້າຮ່ວມອື່ນໆຈໍານວນ 18 ທ່ານ.

**V. ເນື້ອໃນກອງປະຊຸມ:**

**1. ລາຍງານຄວາມຄືບໜ້າກ່ຽວກັບການກະກຽມການຈັດຕັ້ງປະຕິບັດຫ້ອງການຂອງຜູ້ໄດ້ຮັບທຶນຕົ້ນຕໍໃໝ່:**

ຜູ້ຕາງໜ້າທີມງານກະກຽມການຈັດຕັ້ງປະຕິບັດຫ້ອງການຜູ້ໄດ້ຮັບທຶນຕົ້ນຕໍໃໝ່ ໄດ້ນໍາສະເໜີກ່ຽວກັບບັນດາຂັ້ນຕອນການຫັນໆທາກະກຽມການຈັດຕັ້ງປະຕິບັດຈາກຫ້ອງການ PR ເກົ່າ ໄປຍັງ PR ໃໝ່. ຫົວຂໍ້ທີ່ໄດ້ນໍາສະເໜີມີ ຄື: ການຄັດເລືອກເອົາພະນັກງານເຂົ້າເຮັດວຽກ, ການແຕ່ງຕັ້ງຄະນະຮັບຜິດຊອບຫ້ອງການຄຸ້ມຄອງໂຄງການໃໝ່, ຄວາມຕ້ອງການຜູ້ຊ່ວຍເຫຼືອວິຊາການດ້ານການເງິນ, ການໄຫຼວຽນຂອງກອງທຶນ ແລະ ການໂຍກຍ້າຍ & ການໂອນຊັບສິນ.

**2. ລາຍງານຄວາມຄືບໜ້າກ່ຽວກັບສະພາບການກະກຽມການປິດກອງທຶນຊ່ວຍເຫຼືອຮອບປະຈຸບັນ:**

ຫົວໜ້າໜ່ວຍງານການເງິນ ໄດ້ນໍາສະເໜີກ່ຽວກັບສະພາບການກະກຽມການປິດກອງທຶນຊ່ວຍເຫຼືອຂອງຮອບປະຈຸບັນ, ຄວາມຄືບໜ້າແມ່ນຈະບໍ່ມີຄວາມແຕກຕ່າງຈາກຂໍ້ມູນທີ່ໄດ້ລາຍງານໄປແລ້ວ ໃນກອງປະຊຸມ ຄປກທລ ທີ່ໄດ້ຈັດຂຶ້ນໃນວັນທີ 14 ທັນວາ 2017 ທີ່ໂຮງແຮມແລນມາກ ວ່າງມໍ່ໆມານີ້. PUDR ຈະຕ້ອງໄດ້ສົ່ງພາຍໃນວັນທີ 20 ມັງກອນ 2018. ຫົວຂໍ້ສໍາຄັນຂອງການນໍາສະເໜີ ມີຄື: ເງິນສົດທີ່ຍັງເຫຼືອ, ເງິນສົດທີ່ຈະຕ້ອງໄດ້ສົ່ງຄືນ ແລະ ການຕິດຕັ້ງລະບົບບັນຊີ ACCPAC.

3. ກະກຽມການລົງຕິດຕາມກວດກາທີ່ພາກສະໜາມ:

ກອງເລຂາ ຄປກທລ ໄດ້ນຳສະເໜີກ່ຽວກັບແຜນການລົງຕິດຕາມກວດກາທີ່ພາກສະໜາມ. ຈຸດສຳຄັນໃນການນຳສະເໜີ ມີຄື: ແຜນການລົງຕິດຕາມກວດກາທີ່ພາກສະໜາມ ຈະໄດ້ແບ່ງເປັນສາມໄລຍະ ຄື:

- ✓ ເດືອນ ກຸມພາ 2018 ທີ່ແຂວງສາລະວັນ;
- ✓ ເດືອນ ພຶດສະພາ 2018 ທີ່ແຂວງອຸດົມໄຊ;
- ✓ ເດືອນ ສິງຫາ 2018 ທີ່ແຂວງວຽງຈັນ.

ກອງປະຊຸມໄດ້ເຫັນດີເລື່ອນການລົງຕິດຕາມກວດກາທີ່ພາກສະໜາມທີ່ແຂວງສາລະວັນ ອອກໄປເປັນຕົ້ນເດືອນມີນາ 2018 ເນື່ອງຈາກວ່າບັນດາແຜນງານຕ່າງໆຍັງບໍ່ທັນໄດ້ຮັບທຶນຊ່ວຍເຫຼືອຮອບໃໝ່ເທື່ອ ດັ່ງນັ້ນຈຶ່ງໄດ້ເລື່ອນແຜນການຢ້ຽມຢາມດັ່ງກ່າວນີ້.

VI. ການສະຫຼຸບສັງລວມໂດຍຫຍໍ້ ໂດຍປະທານ ຄປກທລ:

ໃນຕອນທ້າຍຂອງກອງປະຊຸມ ທ່ານປະທານ ຄປກທລ ໄດ້ສະຫຼຸບສັງລວມໂດຍຫຍໍ້ ຈາກຜົນການປຶກສາຫາລືກັນໃນກອງປະຊຸມ ດັ່ງນີ້:

1. ໃຫ້ສືບຕໍ່ຮັບເອົາພະນັກງານຂອງ 4 ຕຳແໜ່ງງານ (ພະນັກງານຕິດຕາມແລະປະເມີນຜົນ ສຳລັບແຜນງານTB ຈຳນວນ 01 ທ່ານ, ແຜນງານ HIV 02 ທ່ານ, ຫົວໜ້າ PMU 01 ທ່ານ) ທີ່ຍັງບໍ່ທັນໄດ້ສຳເລັດ;
2. ການໄຫຼວຽນຂອງກອງທຶນ ແມ່ນໃຫ້ໃຊ້ກົນໄກການໂອນເງິນທີ່ມີຢູ່ໃນຊ່ວງທີກເດືອນຕົ້ນປີ 2018 ແລະ ໃຫ້ກົມການເງິນໄປປຶກສາຫາລືກັບກະຊວງການເງິນວ່າ ຫຼັງ 30 ມິຖຸນາ 2018 ເປັນຕົ້ນໄປຈະເຮັດແນວໃດ?;
3. ໃຫ້ສືບຕໍ່ເຮັດ PUDR ໃຫ້ສຳເລັດພາຍໃນເດືອນກຸມພາ 2018 ເນື່ອງຈາກວ່າການກວດສອບຈະໄດ້ເລີ່ມປະຕິບັດໃນເດືອນມີນາ. ສ່ວນລາຍລະອຽດຂອງ ການໂຍກຍ້າຍ ແລະ ໂອນຊັບສິນ ໃຫ້ເຮັດລາຍລະອຽດເປັນພາສາລາວມາໃຫ້ຕື່ມ;
4. ການລົງຕິດຕາມກວດກາທີ່ພາກສະໜາມ: ງົບປະມານແມ່ນມີສະເພາະສະມາຊິກ ຄປກທລ ຈຳນວນ 4 ທ່ານ (ລວມທັງ CSO), 2 ທ່ານທີ່ບໍ່ແມ່ນສະມາຊິກຂອງ ຄປກທລ ແລະ ກອງເລຂາ ຄປກທລ ຈຳນວນ 2 ທ່ານ. ສຳລັບພາກສ່ວນອື່ນໆແມ່ນຈະຕ້ອງໄດ້ໃຊ້ງົບປະມານຂອງຕົນເອງ;
5. ການຂໍເງິນເພີ່ມ: ການຂໍເງິນກອງທຶນເພີ່ມຈຳນວນສິບລ້ານໂດລາສະຫະລັດໃຫ້ແຜນງານ TB ສຳລັບກຸ່ມປະຊາກອນທີ່ເຄື່ອນຍ້າຍນີ້ ໃຫ້ຄະນະສູນວັນນະໂລກເຮັດວຽກຮ່ວມກັນກັບພາກສ່ວນທີ່ກ່ຽວຂ້ອງ ແລະຊ່ວຍກັນຂຽນບົດສະເໜີໂຄງການ ເພື່ອຍາດແຍ່ງເອົາທຶນດັ່ງກ່າວນີ້;
6. ໃຫ້ກຳນົດລະອຽດສຳລັບພາລະບົດບາດ ແລະ ໜ້າທີ່ (TORs) ຂອງຜູ້ຊ່ວຍເຫຼືອວິຊາການດ້ານການເງິນ.

ນະຄອນຫຼວງວຽງຈັນ, ວັນທີ 18/01/2018

ຜູ້ສັງລວມເນື້ອໃນກອງປະຊຸມ

ປະທານກອງປະຊຸມ 30 JAN 2018

ທ່ານ ຣສ. ດຣ. ພູທອນ ເມືອງປາກ

ທ່ານ ໜູກອນ ທະລັງສີ